# ບົດຂ່າວ

**ທຄຕລ ໄດ້ຮັບລາງວັນດີເດັ່ນດ້ານຄຸນນະພາບທຸລະກຳເງິນໂອນຕ່າງປະເທດໃນການຊຳລະສະສາງເປັນສະກຸນໂດລາ ປະຈຳປີ 2024 - The 2024 U.S. Dollar Clearing Quality Recognition Award for Outstanding Achievement of Best-in-Class MT103.**

**ນະຄອນຫຼວງວຽງຈັນ, ວັນທີ: 23/09/2024**




ໃນຕອນບ່າຍຂອງວັນທີ 23 ກັນຍາ  2024 ທີ່ສຳນັກງານໃຫຍ່ ທຄຕລ ໄດ້ມີພິທີການມອບຮັບ ລາງວັນດີເດັ່ນດ້ານຄຸນນະພາບທຸລະກຳເງິນໂອນຕ່າງປະເທດ ໃນການຊຳລະສະສາງເປັນສະກຸນໂດລາ ປະຈຳປີ 2024

The 2024 U.S. Dollar Clearing Quality Recognition Award for Outstanding Achievement of Best-in-Class MT103.

**BCEL** ແມ່ນເປັນທະນາຄານທຸລະກິດ 1 ດຽວໃນ ສປປ ລາວ ທີ່ຄົບຖ້ວນຕາມເງື່ອນໄຂ ແລະ ມາດຕະຖານສາກົນ ໃນການໃຫ້ບໍລິການໂອນເງິນຕ່າງປະເທດ ຂອງ ທະນາຄານ **JP Morgan Chase Bank.** ລາງວັນອັນມີຄຸນຄ່ານີ້, ໃນນາມ BCEL ເຂົ້າຮ່ວມຮັບລາງວັນໂດຍ ທ່ານ ນັນທະລາດ ແກ້ວປະເສີດ, ຮອງຜູ້ອຳນວຍການ ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ.

ພວກເຮົາຂໍຂອບໃຈເປັນຢ່າງສູງມາຍັງ ທະນາຄານ **JP Morgan Chase Bank** ທີ່ໄດ້ມອບລາງວັນອັນຊື່ງຄຸນຄ່ານີ້ໃຫ້ ກັບ BCEL ແລະ ຂໍຂອບໃຈລູກຄ້າທຸກທ່ານທີ່ໃຫ້ການສະໜັບສະໜູນ ຊົມໃຊ້ຜະລິດຕະພັນ ແລະ ການບໍລິການໂອນ ເງິນລະຫວ່າງປະເທດ ຂອງພວກເຮົາໂດຍຕະຫຼອດມາ, ໃນຕໍ່ໜ້າ BCEL ຈະສືບຕໍ່ມຸ້ງໝັ້ນພັດທະນາ ລະບົບການບໍລິ ການ ແລະ ລວມໄປເຖິງຜະລິດຕະພັນໂອນເງິນລະຫວ່າງປະເທດຢ່າງບໍ່ຢຸດຢັ້ງ ເພື່ອໃຫ້ແທດເໝາະກັບຄວາມຕ້ອງ ການຂອງລູກຄ້າຜູ້ໃຊ້ບໍລິການ ໂດຍເນັ້ນໄປສູ່ຄວາມທັນສະໄໝ, ສະດວກສະບາຍ, ຄ່າບໍລິການທີ່ເໝາະສົມ, ມີຄວາມປອດໄພ, ສາມາດກວດສອບ ແລະ ໄດ້ມາດຕະຖານສາກົນ ບົນພື້ນຖານຄວາມຮັບຜິດຊອບສູງຕໍ່ສັງຄົມ ກໍ່ຄືລູກຄ້າຜູ້ທີ່ໃຊ້ບໍລິການ.